ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ ເລກທີ 34 /ນຍ

ນະຄອນຫລວງວຽງຈັນ, ວັນທີ 23.08.2016.

# ຄຳສັ່ງ

## ຂອງນາຍົກລັດຖະມົນຕີ

## ວ່າດ້ວຍ ທິດທາງ, ເປົ້າໝາຍ ແລະ ມາດຕະການ ສ້າງແຂວງ ເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງ ເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານ ເປັນຫົວໜ່ວຍພັດທະນາ.

ເຖິງ: ລັດຖະມົນຕີກະຊວງ, ຫົວໜ້າອົງການທຽບເທົ່າກະຊວງ, ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ເຈົ້າແຂວງ ໃນທົ່ວປະເທດ.

- ອີງຕາມ ມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 03/ກມສພ, ລົງວັນທີ 15 ກຸມພາ 2012 ວ່າດ້ວຍການສ້າງແຂວງ ເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງ ເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານ ເປັນຫົວໜ່ວຍພັດທະນາ;
- ອີງຕາມ ມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 25/ກມສພ, ລົງວັນທີ 22 ທັນວາ 2014 ວ່າດ້ວຍທິດທາງ, ເປົ້າໝາຍ ແລະ ມາດຕະການ ສ້າງແຂວງ ເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງ ເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານ ເປັນຫົວໜ່ວຍພັດທະນາ;
- ອີງຕາມ ຜົນສຳເລັດ ຂອງກອງປະຊຸມສະຫຼຸບຖອດຖອນບົດຮຽນການເຮັດທົດລອງວຽກງານ 3 ສ້າງ ໃນວັນທີ 24-25 ພະຈິກ 2014;
- ອີງຕາມ ມະຕິຕົກລົງ ຂອງສະພາແຫ່ງຊາດ ສະບັບເລກທີ 02/ສພຊ, ລົງວັນທີ 28 ມັງກອນ 2016 ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດເຮັດທົດລອງວຽກງານ 3 ສ້າງ.

ໃນໄລຍະແຕ່ປີ 2011 ເປັນຕົ້ນມາ, ພວກເຮົາໄດ້ສຸມໃສ່ຈັດຕັ້ງການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ VII ເຂົ້າສູ່ຕົວຈິງດ້ວຍຈິດໃຈບຸກທະລຸທັງ ໃນ 4 ດ້ານ ຢ່າງແຂງແຮງ. ພ້ອມກັນນີ້, ພວກເຮົາໄດ້ຈັດຕັ້ງປະຕິບັດການເຮັດທົດລອງວຽກງານ 3 ສ້າງ ຊຶ່ງແມ່ນການແບ່ງຄວາມຮັບຜິດຊອບຄຸ້ມຄອງລະຫວ່າງສູນກາງ ແລະ ທ້ອງຖິ່ນ ໃຫ້ເປັນລະບົບອັນຈະແຈ້ງຕາມທິດ ເພີ່ມສິດ ແລະ ເພີ່ມຄວາມຮັບຜິດຊອບ ໃຫ້ແກ່ທ້ອງຖິ່ນຫລາຍຂຶ້ນ. ໃນຕະຫຼອດໄລຍະຈັດຕັ້ງປະຕິບັດການເຮັດທົດລອງວຽກງານ 3 ສ້າງ ບັນດາກະຊວງ, ຂະແໜງການ ແລະ ທ້ອງຖິ່ນ ເປົ້າໝາຍເຮັດທົດລອງ ໃນທົ່ວປະເທດ ໄດ້ຄົ້ນຄວ້າເຊື່ອມຊຶມ ແລະ ຫັນເອົາເນື້ອໃນ ມະຕິດັ່ງກ່າວ ເປັນນິຕິກຳ, ເປັນແຜນການ, ໂຄງການຕ່າງໆ ເປັນລະບົບຄົບຊຸດ ແລະ ເປັນອັນລະອຽດ ຢ່າງຕໍ່ເນື່ອງ ໂດຍມີການມອບສິດ, ມອບຄວາມຮັບຜິດຊອບ, ການແບ່ງປັນຜົນປະໂຫຍດອັນເໝາະສົມ ໃຫ້ແກ່ທ້ອງຖິ່ນຮາກຖານ ຢ່າງຈະແຈ້ງ ພ້ອມທັງ

ຈັດຕັ້ງປະຕິບັດຕົວຈິງ ໄດ້ຮັບຜົນສຳເລັດເປັນຢ່າງດີ, ເຮັດໃຫ້ຄວາມເປັນເຈົ້າການ ແລະ ຄວາມຮັບຜິດຊອບຂອງທ້ອງຖິ່ນຮາກຖານ ໄດ້ຮັບການຍົກສູງຂຶ້ນ. ແຕ່ການເຮັດທົດລອງຜ່ານມານັ້ນ, ຕົ້ນຕໍ ແມ່ນເລັ່ງໃສ່ຈັດຕັ້ງປະຕິບັດຢູ່ຂັ້ນບ້ານ ໃນ 109 ບ້ານເປົ້າໝາຍເຮັດທົດລອງ, ສ່ວນຂັ້ນແຂວງ ແລະ ຂັ້ນເມືອງນັ້ນ ແມ່ນຍັງບໍ່ທັນໄດ້ລົງເລິກຈັດຕັ້ງປະຕິບັດເທື່ອ. ພ້ອມດຽວກັນນີ້, ຄວາມຮັບຮູ້ເຂົ້າໃຈຕໍ່ການເຮັດທົດລອງ ຂອງບັນດາກະຊວງ ແລະ ທ້ອງຖິ່ນຮາກຖານ ຍັງບໍ່ທັນເລິກເຊິ່ງ ແລະ ຍັງບໍ່ເປັນເອກະພາບກັນສູງແທ້.

ສະນັ້ນ, ເພື່ອແກ້ໄຂບັນຫາຂໍ້ຄົງຄ້າງ ທີ່ກ່າວມາຂ້າງເທິງ, ທັງເປັນການຜັນຂະຫຍາຍຜົນສຳເລັດການເຮັດທົດລອງວຽກງານ 3 ສ້າງ, ກົມການເມືອງສູນກາງພັກ ຈຶ່ງໄດ້ອອກມະຕິສະບັບເລກທີ 25/ກມສພ, ລົງວັນທີ 22 ທັນວາ 2014 ວ່າດ້ວຍທິດທາງ, ເປົ້າໝາຍ ແລະ ມາດຕະການສ້າງແຂວງ ເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງ ເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານ ເປັນຫົວໜ່ວຍພັດທະນາ ແນໃສ່ຜັນຂະຫຍາຍວຽກງານ 3 ສ້າງ ຢ່າງກວ້າງຂວາງ ແລະ ເລິກເຊິ່ງໃນທົ່ວປະເທດ. ພ້ອມດຽວກັນນັ້ນກໍເພື່ອແນໃສ່ເຮັດໃຫ້ການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ VIII ກໍຄື ລັດຖະທຳມະນູນ, ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບປັບປຸງປີ 2015 ໃຫ້ໄດ້ຮັບຜົນດີ, ຮັບປະກັນໃຫ້ແກ່ການສ້າງແຂວງ ເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງ ເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານ ເປັນຫົວໜ່ວຍພັດທະນາ ໃຫ້ເຂົ້າສູ່ລວງເລິກ ຕິດພັນກັບວຽກງານກໍ່ສ້າງຮາກຖານການເມືອງ ແລະ ພັດທະນາຊົນນະບົດຮອບດ້ານ ຕາມ 4 ເນື້ອໃນ 4 ຄາດໝາຍ ໃຫ້ປະກົດຜົນເປັນຈິງ.

## ນາຍົກລັດຖະມົນຕີ ອອກຄຳສັ່ງ:

1. ໃຫ້ລັດຖະມົນຕີກະຊວງ, ຫົວໜ້າອົງການທຽບເທົ່າກະຊວງ, ເຈົ້າຄອງນະຄອນຫຼວງວຽງຈັນ, ເຈົ້າແຂວງ ໃນທົ່ວປະເທດ ເອົາໃຈໃສ່ນຳພາ-ຊີ້ນຳການຈັດຕັ້ງຄົ້ນຄວ້າ, ຮໍ່າຮຽນ ເຊື່ອມຊຶມມະຕິກົມການເມືອງສູນກາງພັກ ສະບັບເລກທີ 25/ກມສພ, ລົງວັນທີ 22 ທັນວາ 2014 ແລະ ຄຳສັ່ງນາຍົກລັດຖະມົນຕີ ສະບັບນີ້ ຢ່າງເລິກເຊິ່ງ ແລະ ທົ່ວເຖິງ ຕິດພັນກັບການເຜີຍແຜ່ບົດຮຽນ ທີ່ຖອດຖອນໄດ້ຈາກການເຮັດທົດລອງວຽກງານ 3 ສ້າງໃນໄລຍະຜ່ານມາ ຂອງຂະແໜງການ, ອົງການ ແລະ ທ້ອງຖິ່ນຂອງຕົນ ໃຫ້ຄະນະພັກ, ພະນັກງານ, ສະມາຊິກພັກ ແຕ່ຂັ້ນກະຊວງ ລົງຮອດຮາກຖານບ້ານ ເຂົ້າໃຈຢ່າງເລິກເຊິ່ງ ແລະ ທົ່ວເຖິງທຸກເປົ້າໝາຍ ໃຫ້ສຳເລັດ ໃນເດືອນ ພະຈິກ 2016 ເພື່ອສ້າງຄວາມເປັນເອກະພາບສູງ ໃນການຈັດຕັ້ງປະຕິບັດ;
2. ໃຫ້ຮີບຮ້ອນຄົ້ນຄວ້າ, ອອກນິຕິກຳ ແລະ ວາງແຜນຜັນຂະຫຍາຍມະຕິ ຂອງກົມການເມືອງສູນກາງພັກ ແລະ ຄຳສັ່ງ ຂອງນາຍົກລັດຖະມົນຕີ ສະບັບນີ້ ໃຫ້ສອດຄ່ອງກັບສະພາບການຕົວຈິງ ກໍຄືພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ ຂອງອົງການ, ຂະແໜງການ ແລະ ທ້ອງຖິ່ນ ຂອງຕົນ ໂດຍວາງຄາດໝາຍສູ້ຊົນແຕ່ລະດ້ານໃຫ້ຈະແຈ້ງ ເພື່ອຈັດຕັ້ງປະຕິບັດໃນແຕ່ລະປີ ໃຫ້ປະກົດຜົນເປັນຈິງ ເປັນກ້າວໆ;
3. ໃຫ້ກະຊວງ, ອົງການທຽບເທົ່າກະຊວງ ຮີບຮ້ອນຄົ້ນຄວ້າ ແລະ ປັບປຸງດຳລັດນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຕົນ ພ້ອມທັງປັບປຸງກົນໄກ, ລະບຽບການຕ່າງໆ ທີ່ຈຳເປັນໃຫ້ສອດຄ່ອງກັບທິດນຳ 3 ສ້າງ ແນໃສ່ຫັນກະຊວງ, ອົງການທຽບເທົ່າກະຊວງ ໄປສູ່ການປະຕິບັດພາລະບົດບາດຄຸ້ມຄອງມະຫາພາກ ຢ່າງຂາດຕົວ, ຈະແຈ້ງ ແລະ ມີປະສິດທິຜົນ ໂດຍເລັ່ງໃສ່:

    3.1 ຄົ້ນຄວ້າ ແລະ ຫັນແນວທາງ, ນະໂຍບາຍຂອງພັກ ທີ່ກ່ຽວຂ້ອງກັບພາລະບົດບາດຂອງຂະແໜງຕົນ ເປັນແຜນຍຸດທະສາດ, ແຜນງານ ແລະ ໂຄງການວຽກງານເພື່ອພັດທະນາຂະແໜງການ ຂອງຕົນໃນທົ່ວປະເທດ;

3.2 ຄົ້ນຄວ້າປັບປຸງ, ອອກນະໂຍບາຍ, ນິຕິກຳ, ລະບຽບການຄຸ້ມຄອງຂະແໜງການຂອງຕົນ ໃນທົ່ວປະເທດ;

3.3 ຄົ້ນຄວ້າ ຂື້ນແຜນກຳນົດ, ວາງມາດຖານຕຳແໜ່ງງານ, ຈັດຕັ້ງກໍ່ສ້າງ-ບຳລຸງຍົກລະດັບ ແລະ ຕິດຕາມກວດກາການບັນຈຸຊັບຊ້ອນ ນຳໃຊ້ພະນັກງານໃນຂະແໜງການ ຂອງຕົນໃນທົ່ວປະເທດ;

3.4 ຄົ້ນຄວ້າວິທະຍາສາດ ແລະ ເຜີຍແຜ່ແນະນຳການນຳໃຊ້ວິທະຍາສາດ, ວິທະຍາການໃໝ່ ພັດທະນາຂະແໜງການ ຂອງຕົນໃນທົ່ວປະເທດ ລວມທັງການຫັນເປັນທັນສະໄໝ;

3.5 ຕິດຕາມ, ກວດກາ, ຊຸກຍູ້, ປະເມີນຜົນ ການຈັດຕັ້ງປະຕິບັດກົດໝາຍ, ນະໂຍບາຍ, ວຽກງານ ສຳຄັນຕ່າງໆ ຂອງຂະແໜງການໃນທົ່ວປະເທດ.

ພ້ອມກັນນັ້ນ, ໃຫ້ທຸກກະຊວງ ແລະ ອົງການທຽບເທົ່າກະຊວງ ຈົ່ງພ້ອມກັນກວດກາ ແລະ ຄົ້ນຄວ້າຄືນ ການແບ່ງຂັ້ນຄຸ້ມຄອງ, ການມອບວຽກ, ມອບຄວາມຮັບຜິດຊອບ ແລະ ຜົນປະໂຫຍດ ໃຫ້ນະຄອນຫຼວງວຽງຈັນ, ແຂວງ ຕ່າງໆ ໃຫ້ລະອຽດຈະແຈ້ງ ເພື່ອຊ່ວຍນະຄອນຫຼວງວຽງຈັນ, ແຂວງ ຈັດຕັ້ງປະຕິບັດການສ້າງແຂວງ ເປັນຫົວໜ່ວຍຍຸດທະສາດ, ການສ້າງເມືອງ ເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານ ເປັນຫົວໜ່ວຍ ພັດທະນາ ໃຫ້ຖືກຕ້ອງຕາມທິດທາງ, ມາດຕະຖານລວມ ທີ່ກຳນົດໄວ້ໃນມະຕິກົມການເມືອງສູນກາງພັກ ສະບັບເລກທີ 25/ກມສພ ແລະ ສອດຄ່ອງກັບສະພາບຕົວຈິງ ຂອງແຕ່ລະທ້ອງຖິ່ນຮາກຖານ.

4. ໃຫ້ແຂວງ, ນະຄອນຫຼວງວຽງຈັນ ຮີບຮ້ອນຄົ້ນຄວ້າ ແລະ ຜັນຂະຫຍາຍທິດທາງ, ມາດຖານ ແລະ ມາດຕະການໃນການສ້າງ ນະຄອນຫຼວງວຽງຈັນ ແລະ ແຂວງ ຂອງຕົນ ໃຫ້ເປັນຫົວໜ່ວຍຍຸດທະສາດ ໃນໄລຍະ 5 ປີ ຕໍ່ໜ້າ ແລະ ຮອດປີ 2025, 2030 ໂດຍເລັ່ງໃສ່ 7 ດ້ານຄື:

4.1. ຕ້ອງເປັນຫົວໜ່ວຍຍຸດທະສາດ ດ້ານການກໍ່ສ້າງພັກ-ພະນັກງານ;

4.2. ຕ້ອງເປັນຫົວໜ່ວຍຍຸດທະສາດ ດ້ານການປົກຄອງ ແລະ ການບໍລິຫານລັດ ດ້ວຍກົດໝາຍ ທີ່ສັກສິດ;

4.3. ຕ້ອງເປັນຫົວໜ່ວຍຍຸດທະສາດ ດ້ານການຊຸກດັນການຂະຫຍາຍຕົວຂອງເສດຖະກິດ ແຫ່ງຊາດ ໂດຍມີຍຸດທະສາດ ແລະ ມີແຜນພັດທະນາ, ມີທິດກຳນົດໃນການຂຸດຄົ້ນ ແລະ ເສີມຂະຫຍາຍທ່າແຮງ ໃນດ້ານຕ່າງໆ ທີ່ມີຢູ່ພາຍໃນທ້ອງຖິ່ນ ຂອງຕົນ;

4.4. ຕ້ອງເປັນຫົວໜ່ວຍຍຸດທະສາດ ດ້ານການເງິນ ຂອງປະເທດ;

4.5. ຕ້ອງເປັນຫົວໜ່ວຍຍຸດທະສາດ ດ້ານການຄຸ້ມຄອງ, ຂຸດຄົ້ນ ແລະ ນຳໃຊ້ແຫຼ່ງຊັບພະຍາກອນທຳມະຊາດ, ຊັບສິນຂອງລັດ, ພື້ນຖານໂຄງລ່າງດ້ານເສດຖະກິດ-ສັງຄົມ, ພື້ນຖານວັດຖຸ-ເຕັກນິກ ແລະ ປົກປັກຮັກສາສິ່ງແວດລ້ອມ ໃຫ້ມີປະສິດທິພາບ ແລະ ຖືກຕ້ອງຕາມກົດໝາຍກຳນົດ ຢ່າງເຂັ້ມງວດ;

4.6. ຕ້ອງເປັນຫົວໜ່ວຍຍຸດທະສາດ ດ້ານການຄຸ້ມຄອງວັດທະນະທຳ-ສັງຄົມ ແລະ ການພັດທະນາຊັບພະຍາກອນມະນຸດ;

4.7. ຕ້ອງເປັນ ຫົວໜ່ວຍຍຸດທະສາດ ດ້ານການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທີ່ເຂັ້ມແຂງ;

ພ້ອມກັນນີ້, ແຂວງ ແລະ ນະຄອນຫຼວງວຽງຈັນ ຕ້ອງກວດກາ ແລະ ປັບປຸງການແບ່ງຂັ້ນຄຸ້ມຄອງ, ມອບວຽກ, ມອບຄວາມຮັບຜິດຊອບ ແລະ ຜົນປະໂຫຍດ ທີ່ເໝາະສົມ ໃຫ້ແກ່ເມືອງ ໃຫ້ລະອຽດຈະແຈ້ງ ເພື່ອສ້າງເງື່ອນໄຂອຳນວຍໃຫ້ເມືອງ ສາມາດສ້າງຕົນເອງ ເປັນຫົວໜ່ວຍເຂັ້ມແຂງຮອບດ້ານ.

**ຄາດໝາຍສູ້ຊົນ ແຕ່ນີ້ຮອດປີ 2020 ຕ້ອງສ້າງແຂວງ ໃຫ້ເປັນຫົວໜ່ວຍຍຸດທະສາດ ຢ່າງໜ້ອຍໃຫ້ໄດ້ແຕ່ 5-10 ແຂວງ.**

5. ໃຫ້ແຂວງ ແລະ ນະຄອນຫຼວງວຽງຈັນ ຮີບຮ້ອນຊີ້ນໍາ ແລະ ຊ່ວຍເມືອງ ໃນການຄົ້ນຄວ້າ ແລະ ຜັນຂະຫຍາຍການສ້າງເມືອງ ໃຫ້ເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ໂດຍສຸມໃສ່ 5 ດ້ານດັ່ງນີ້:
   - 5.1. ດ້ານການກໍ່ສ້າງພັກ-ພະນັກງານ;
   - 5.2. ດ້ານການປົກຄອງ ແລະ ຄຸ້ມຄອງບໍລິຫານລັດ ດ້ວຍກົດໝາຍ ຢ່າງສັກສິດ;
   - 5.3. ດ້ານເສດຖະກິດ-ການເງິນ ຊັບສິນ ຂອງລັດ, ການປົກປັກຮັກສາ, ການຂຸດຄົ້ນ, ການຄຸ້ມຄອງ ແລະ ນໍາໃຊ້ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຢ່າງມີປະສິດທິຜົນ;
   - 5.4. ດ້ານວັດທະນະທໍາ-ສັງຄົມ ແລະ ການພັດທະນາຊັບພະຍາກອນມະນຸດ;
   - 5.5. ດ້ານການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

ພ້ອມກັນນັ້ນ, ເມືອງ ກໍຕ້ອງກວດກາຄືນ ແລະ ປັບປຸງການແບ່ງຂັ້ນຄຸ້ມຄອງ ໃຫ້ບ້ານ ໃຫ້ລະອຽດຈະແຈ້ງ ເພື່ອສ້າງບ້ານ ເປັນຫົວໜ່ວຍພັດທະນາ ທີ່ມີຄຸນນະພາບ ແລະ ປະສິດທິຜົນຕາມມາດຕະຖານ ທີ່ກໍານົດໃນແຕ່ລະໄລຍະ.

**ຄາດໝາຍສູ້ຊົນລວມ ແຕ່ນີ້ຫາປີ 2020 ແຕ່ລະແຂວງ ໃຫ້ສາມາດ ສ້າງເມືອງ ເຂັ້ມແຂງຮອບດ້ານ ໃຫ້ໄດ້ ຢ່າງໜ້ອຍ 2-5 ເມືອງ.**

6. ໃຫ້ເມືອງ ຮີບຮ້ອນຄົ້ນຄວ້າ ແລະ ຊີ້ນໍາບ້ານ ເພື່ອຜັນຂະຫຍາຍການສ້າງບ້ານ ເປັນຫົວໜ່ວຍພັດທະນາ ຕາມ 4 ເນື້ອໃນ 4 ຄາດໝາຍ ໃນທົ່ວເມືອງ ຂອງຕົນ ໃນນີ້:
   - 6.1. ໃຫ້ປະເມີນຄືນໃໝ່ ການປະກາດບ້ານພັດທະນາ ໃນໄລຍະທີ່ຜ່ານມາ ໃຫ້ຮັບປະກັນດ້ານຄຸນນະພາບ ແລະ ປະສິດທິຜົນຕົວຈິງ;
   - 6.2. ຄົ້ນຄວ້າ ແລະ ຜັນຂະຫຍາຍບົດຮຽນ ການເຮັດທົດລອງ ການສ້າງບ້ານພັດທະນາ ໃນທົ່ວເມືອງ. ພ້ອມກັນນັ້ນ, ກໍໃຫ້ກໍານົດບ້ານເປົ້າໝາຍຈຸດສຸມ ເພື່ອສ້າງເປັນບ້ານພັດທະນາໃນຕໍ່ໜ້າ (ໃນປີ 2016-2020 ແລະ ໃນແຕ່ລະປີ) ໃຫ້ລະອຽດຈະແຈ້ງ, ໂດຍເລັ່ງໃສ່ບ້ານໃນເທດສະບານເມືອງ ແລະ ບ້ານທີ່ມີເງື່ອນໄຂຄົບຖ້ວນ ບ້ານເປົ້າໝາຍລຶບລ້າງຄວາມທຸກຍາກ ເພື່ອກໍານົດເປັນເປົ້າໝາຍຈຸດສຸມໃນການສ້າງບ້ານພັດທະນາຂອງແຕ່ລະເມືອງ;
   - 6.3. ໃນການສ້າງບ້ານພັດທະນາ ຕ້ອງຮັບປະກັນທັງໃນ 4 ດ້ານຄື: (1) ພັດທະນາລະບົບການເມືອງ ປະຊາທິປະໄຕ ປະຊາຊົນ ພາຍໃນບ້ານ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ, ປອດໃສ ຕິດພັນກັບການຍົກສູງສະຕິເຄົາລົບ ແລະ ປະຕິບັດກົດໝາຍ ຢ່າງເຂັ້ມງວດ; (2) ພັດທະນາບ້ານ ໃຫ້ກາຍເປັນຫົວໜ່ວຍການຜະລິດສິນຄ້າ ແລະ ການບໍລິການທີ່ດີ, ເປັນບ້ານທີ່ສາມາດສ້າງກອງທຶນພັດທະນາ ຮັບປະກັນໃນດ້ານລາຍຮັບ-ລາຍຈ່າຍ; (3) ພັດທະນາບ້ານ ໃຫ້ກາຍເປັນຫົວໜ່ວຍວັດທະນະທໍາ-ສັງຄົມ ທີ່ດີງາມ ຂອງລະບອບປະຊາທິປະໄຕ ປະຊາຊົນ; (4) ພັດທະນາບ້ານ ໃຫ້ກາຍເປັນຫົວໜ່ວຍປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທີ່ເຂັ້ມແຂງ, ເປັນບ້ານປ້ອມໜັ້ນສູ້ຮົບ ແລະ ກຸ່ມບ້ານສູ້ຮົບຕິດລຽນ.

**ຄາດໝາຍສູ້ຊົນລວມ ແຕ່ນີ້ຮອດປີ 2020 ຕ້ອງສ້າງບ້ານພັດທະນາ ຢ່າງໜ້ອຍໃຫ້ໄດ້ 2 ສ່ວນ 3 ຂອງຈໍານວນບ້ານ ໃນແຕ່ລະເມືອງ.**

6.4. ເມືອງຕ້ອງ ສືບຕໍ່ຄົ້ນຄວ້າປັບປຸງການເຕົ້າໂຮມບ້ານນ້ອຍ ໃຫ້ເປັນບ້ານໃຫຍ່ ແລະ ສ້າງບ້ານໃຫຍ່ ໃຫ້ເປັນຕົວເມືອງໃນຊົນນະບົດ ໃຫ້ສອດຄ່ອງກັບຈຸດພິເສດ ແລະ ທ່າແຮງຕົວຈິງ ແຕ່ລະພື້ນທີ່ ຂອງເມືອງ.

ໃນການເຕົ້າໂຮມບ້ານນ້ອຍ ເປັນບ້ານໃຫຍ່ ຕ້ອງຮັບປະກັນການຈັດສັນທີ່ດິນຕັ້ງພູມລຳເນົາຄົງທີ່, ຮັບປະກັນການຈັດສັນທີ່ດິນທຳມາຫາກິນຖາວອນ ແລະ ອາຊີບຄົງທີ່ ໃຫ້ແຕ່ລະຄອບຄົວ ເພື່ອໃຫ້ເຂົາເຈົ້າ ມີຄວາມອຸ່ນອຽນ, ໝັ້ນໃຈທຳການຜະລິດສິນຄ້າ, ທຳມາຫາກິນ ແລະ ດຳລົງຊີວິດ ໃຫ້ດີຂຶ້ນກວ່າເກົ່າ;

**ຄາດໝາຍສູ້ຊົນລວມ ແຕ່ນີ້ຮອດປີ 2020, ເມືອງຕ້ອງສູ້ຊົນ ສ້າງບ້ານໃຫຍ່ ໃຫ້ເປັນຕົວເມືອງໃນຊົນນະບົດ ໃຫ້ໄດ້ຢ່າງໜ້ອຍ ເມືອງລະ 1-2 ແຫ່ງ, ລວມທົ່ວປະເທດບໍ່ໃຫ້ຫຼຸດ 213 ແຫ່ງ.**

7. ໃຫ້ກະຊວງ, ອົງການທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງວຽງຈັນ ແລະ ເມືອງໃນທົ່ວປະເທດ ຄົ້ນຄວ້າຂຶ້ນງົບປະມານ ເຂົ້າໃນແຜນງົບປະມານລວມປົກກະຕິ ປະຈຳປີ ຂອງຕົນ ເພື່ອຈັດຕັ້ງປະຕິບັດ. ກະຊວງການເງິນ ຕ້ອງແນະນຳໃຫ້ຂະແໜງການເງິນ ທົ່ວປະເທດ ເປັນເຈົ້າການຊ່ວຍແນະນຳກ່ຽວກັບການຈັດສັນງົບປະມານ ເຂົ້າໃສ່ວຽກງານ 3 ສ້າງ ຂອງຂະແໜງການ ແລະ ທ້ອງຖິ່ນ ໃນແຕ່ລະປີ;

8. ມອບໃຫ້ລັດຖະມົນຕີກະຊວງ, ຫົວໜ້າອົງການທຽບເທົ່າກະຊວງ, ເຈົ້າຄອງນະຄອນຫຼວງວຽງຈັນ, ເຈົ້າແຂວງ ແລະ ເຈົ້າເມືອງໃນທົ່ວປະເທດ ເປັນຜູ້ຮັບຜິດຊອບຈັດຕັ້ງປະຕິບັດ ຄຳສັ່ງສະບັບນີ້; ພ້ອມທັງປະເມີນຜົນການຈັດຕັ້ງປະຕິບັດ ແລ້ວລາຍງານໃຫ້ ນາຍົກລັດຖະມົນຕີ ຮັບຊາບເປັນປົກກະຕິ. ໃນໄລຍະຈັດຕັ້ງປະຕິບັດ ຕ້ອງເອົາໃຈໃສ່ປະສານສົມທົບ ລະຫວ່າງສູນກາງ ແລະ ທ້ອງຖິ່ນ ທັງສາຍຕັ້ງ ແລະ ສາຍຂວາງ ໃຫ້ກົມກຽວກັນ ເປັນຕົ້ນແມ່ນ ການຕົກລົງກ່ຽວກັບກົງຈັກການຈັດຕັ້ງ ແລະ ບຸກຄະລາກອນ ຂັ້ນຕ່າງໆ. ພ້ອມກັນນີ້ ຖ້າຫາກມີບັນຫາໃດຕ້ອງການຂໍຄຳເຫັນຊີ້ນຳຕື່ມ ກໍໃຫ້ລາຍງານຂໍທິດຊີ້ນຳຈາກນາຍົກລັດຖະມົນຕີ ໃຫ້ທັນເວລາ.

ມອບໃຫ້ກະຊວງພາຍໃນ ຊ່ວຍນາຍົກລັດຖະມົນຕີ ແນະນຳການຜັນຂະຫຍາຍ, ຕິດຕາມ, ຊຸກຍູ້ ແລະ ປະເມີນຜົນການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ໃຫ້ເປັນປົກກະຕິ ແລະ ຕໍ່ເນື່ອງ;

9. ຄຳສັ່ງ ສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ